

# ໂລງພໍ່ຕູ້

ໂຮມເລື່ອງສັ້ນ ຂອງ

ດວງຈຳປາ

ໂຮມເລື່ອງສັ້ນ

# ໂລງພໍ່ຕູ້

ໂດຍ: ດວງຈຳປາ

ສຳນັກພິມດອກເກດ
2012

# ໂລງພໍ່ຕູ້

ໂຮມເລື່ອງສັ້ນ ໂດຍ: ດວງຈຳປາ

ຮູບປະກອບ: ສຸກພັນສາ ພູຜາສຸກ
ອຳພັນທອງ ເພັດບຸນພອນ
ສຸຣະພີ ວີຣະວົງ

ບັນນາທິການ: ດວງເດືອນ ບຸນຍາວົງ

ອອກແບບຈັດໜ້າ: ຄຳມັກ ວົງສັກດາ

ອອກແບບໜ້າປົກ: ສຸກພັນສາ ພູຜາສຸກ

ຈັດພິມ ແລະ ຈຳໜ່າຍ:

ດອກເກດ
DokkeD
Publising Co.,Ltd

ສຳນັກພິມດອກເກດ
ສົນໃຈສັ່ງຊື້ ຫຼື ຮັບໄປຈຳໜ່າຍ
ຕິດຕໍ່: ດາຣາ ກັນລະຍາ ໂທ: 020 5561 2940,
e-mail: k_dara40@yahoo.com

ອຸປຖຳໂດຍ:

M-Point Mart

DATA COM

ທະບຽນອະນຸຍາດ ເລກທີ: 379/ພຈ 04092012
ພິມຄັ້ງທີ 1, ວຽງຈັນ ສ.ປ.ປ ລາວ, ກັນຍາ 2012
ຈຳນວນ: 2000 ຫົວ
ພິມທີ່: ໂຮງພິມ ລາວ ຢູນິພຣິນ

ສະຫງວນລິຂະສິດ © ດາຣາ ກັນລະຍາ, 2012

# ສາລະບັນ


ຄຸນຄ່າທີ່ອະມະຕະ ............. ກ

ຍັງຄອງທີ່ຫຼັກແປດ ................. 3

ຈາກບົວແກ້ວສູ່ໂສພາ.................. 13

ເລື່ອງຂອງທິດມາກ ................. 27

ໂລງພໍ່ຕູ້ ................. 57

ຕາກາຍ ................. 69

ພໍ່ຍັງບໍ່ຕາຍ ................. 83

ຊ່ຳນັ້ນແຫຼະ...ຜູ່ຊາຍ ................. 93

ເປັນໄປໄດ້ ................. 107

ເພື່ອຜູ່ເກີດໃໝ່ ................. 123

ມືຖື ................. 145

# ຄຳສະເໜີຂອງສຳນັກພິມ

# ຄຸນຄ່າທີ່ອະມະຕະ

10 ເລື່ອງສັ້ນ ທີ່ເດີນຕາມເສັ້ນທາງແຫ່ງສວນອັກສອນມາແຕ່ກາງສະຕະວັດທີ 20 ມາຮອດຕົ້ນສະຕະວັດທີ 21 (1958 – 2009) ດວງຈຳປາ ສອດຮ້ອຍພວງມາລາແຫ່ງດວງອັກສອນແຊມຊ້ອນໃສ່ກັບເຫດການບ້ານເມືອງ ທີ່ພິກປີ້ນປ່ຽນແປງວິຖີຊີວິດຂອງໂຕລະຄອນຕາມການເວລາ.

ອາດຈະຕ້ອງເລີ່ມຈາກເລື່ອງອາຍຸຫຼາຍທີ່ສຸດໃນຊຸດນີ້ ຄື "ຍັງຄອງຢູ່ທີ່ຫຼັກແປດ" ຂຽນແຕ່ປີ 1958 !

ຄົນຮຸ່ນໃໝ່ໃຫຍ່ລຸນ ອາດຈະຕ້ອງຊອກຮູ້ວ່າ ໃນຍຸກນັ້ນເຫດການບ້ານເມືອງເປັນແນວໃດ, ຜູ້ຊາຍ ທີ່ມາຊ່ອຍດຶງມືສາວນາງຜູ້ເກືອບພາຮ່າງກາຍທີ່ຍັງໜຸ່ມແໜ້ນ ລອຍລິ່ວລິງໄປຢູ່ກົ້ນເຫວນ້ຳຕົກຕາດທີ່ຫຼັກແປດ ເມືອງປາກເຊ ແມ່ນໃຜ? ຂະນະທີ່ອ່ານໄປກໍອິດຄຶດບໍ່ໄດ້ວ່າ"ເອີ! ຫຼືວ່າຈະເປັນສິ່ງສັກສິດ ເຈົ້າຖິ່ນເຈົ້າຖານບໍ? ຫຼືວ່າຜູ້ຂຽນຫາກຈິນຕະນາການຂຶ້ນ ໃຫ້ເລື່ອງເລົ່າຊວນຕິດຕາມ? ຄືວ່ານັ້ນລະ ເລື່ອງບາງເລື່ອງບໍ່ເປັນຕາເຊື່ອກໍຕ້ອງໄດ້ເຊື່ອໄປກ່ອນບໍ່ຊັ້ນ... ອາໄສເວລາ ເປັນສິ່ງພິສູດ ອາດຈະດີທີ່ສຸດ.

ແນ່ນອນ ດວງຈຳປາ ຜູ້ຊ່າງຄິດຊ່າງຝັນ ຫາກຊ່າງນຳເອົາສິ່ງທີ່ອາດຈະເກີດ ອາດຈະເປັນໄປໄດ້ ມາຕົກແຕ່ງແປງຄວາມໃຫ້ເຮົາຄິດເຮົາຄົ້ນໄປນຳ ແລະບໍ່ອາດປະຕິເສດໄດ້ຢ່າງເຕັມປາກເຕັມຄວາມວ່າ ບໍ່ຄືກັບເລື່ອງຈິງຄົນແທ້ຂອງຫຼາຍໆຊີວິດ ທີ່ກາຍເປັນໂສກນາຕະກຳເຊິ່ງບໍ່ອາດລືມໄດ້ ເຊັ່ນເລື່ອງຂອງ ທິດມາກບ້ານໂພນຂາມງອຍ (ທິດມາກບ້ານໂພນຂາມງອຍ, 1971) ກັບບົວແດງ ສາວງາມປະຈຳບ້ານ ທີ່ເນື້ອເລື່ອງຖືກຂະຫຍາຍຕື່ມໃຫ້ກາຍເປັນລະຄອນເວທີ ແລະຮູບເງົາມາແລ້ວ ເມື່ອຊຸມທ້າຍປີ 1980 ໃນຊື່ໃໝ່ວ່າ ຫອມກິ່ນບົວແດງ.

ທິດມາກ ໂຕລະຄອນຊາຍ ເປັນຄົນປ່ວງບ້າເສຍຈິດ, ເຂົາມີເບື້ອງຫຼັງ ຄວາມເປັນມາຢ່າງໃດ? ຄວາມຮັກຄວາມຜິດຫວັງຄວາມອາຄາດແຄ້ນ ... ຖືກນຳມາປະສົມປະສານເຂົ້າເປັນເນື້ອດຽວກັນ ຈູງໃຈໃຫ້ພວກເຮົາຕ້ອງຄິດຄຳນຶງ ແລະເຫັນໄດ້ກົດແຫ່ງກຳ ທີ່ຜູ້ຄົນໃນຍຸກນີ້ອາດຈະຫຼົງລືມໄປຫຼາຍແລ້ວ.

ເຖິງດວງຈຳປາ ເປັນນັກຂຽນຍິງ ທີ່ມັກປົກປ້ອງກຽດສັກສີຂອງແມ່ຍິງ ເວົ້າລວມ ແຕ່ບາງຄັ້ງພຶດຕິກຳ ທີ່ເປັນຈຸດອ່ອນປະຈຳໂຕຂອງແມ່ຍິງລາວຈຳນວນນຶ່ງ ກໍບໍ່ເວັ້ນທີ່ຈະຖືກນຳຂຶ້ນຂຽນຟັກຟັນຈິນມຸ່ນມົນ ທັງສຽດສີຢອກໄຍເພດຊາຍຕື່ມ ທີ່ເລືອກແລ້ວເລືອກອີກ ກໍຍັງໜີບໍ່ພົ້ນດັ່ງ ທ່ານບຸນສະໜອງ ທີ່ເລືອກເອົາບົວແກ້ວ ສາວສັງຄົມ ມີຄວາມຮູ້ ມີຖານະ ແຕ່ທັງໝົດກໍປ່ຽນແປງໄປຈົນອົດບໍ່ລົນທົນບໍ່ໄດ້ ຈຶ່ງຕ້ອງເລືອກເອົາຄວາມໂສດອີກເທື່ອໃໝ່ແລ້ວກໍຕັດສິນໃຈອີກໃໝ່ ແບບວ່າໃນທິດກົງກັນຂ້າມເລີຍ ແຕ່ແລ້ວ

ສາວຄູໂສພາ (ຈາກບົວແກ້ວ ສູ່ໂສພາ, 1971) ຜູ້ຄ່ຽມຄົມ ສະຫງົບ ສະຫງ່ຽມຈຽມໂຕ ກໍພັດທະນາປ່ຽນແປງຕົນເອງໃຫ້ເຂົ້າກັບສັງຄົມ ໃໝ່ທີ່ນາງຫາກໍຮູ້ຈັກ. ແມ່ຍິງທັງສອງແບບມີໂຕຕົນຢູ່ໃນສັງຄົມລາວ ມາແຕ່ເຫິງນານ, ລ່ວງມາຮອດຍຸກໃໝ່ ປະຕິວັດສາມສິບປາຍປີ ແລ້ວ ພຶດຕິກຳປະເພດນີ້ຂອງແມ່ຍິງລາວ ທັງທີ່ມີຄວາມຮູ້ ແລະບໍ່ມີ ຄວາມຮູ້ສູງ ກໍຍັງມີຫຼົງເຫຼືອເຫັນຢູ່ທົ່ວໄປ ອາດຈະຫຼາຍຂຶ້ນ ຫຼື ໜ້ອຍລົງ ຫຼືແຝງໂຕຢູ່ໃນຫຼາຍຮູບແບບ ອັນນີ້ກໍຕ້ອງເບິ່ງກັນດີໆ. ມັນຈະເກີດຫຍັງຂຶ້ນກັບສັງຄົມ ຖ້າຍັງເປັນຈັ່ງຊີ້ຢູ່ຕໍ່ໄປ ? ອີກເທື່ອນຶ່ງ ນັກຂຽນຕັ້ງໂຈດໃຫ້ສະມາຊິກສັງຄົມ ແລະຜູ່ເປັນຫົວຈັກຫຼັກແຫຼ່ງ ທີ່ມີຄວາມຮັບຜິດຊອບທັ້ງຫຼາຍ ໄດ້ຄຶດໄຕ່ຮື່ນຕອງຊ່ອຍກັນ. ແຕ່ ໃນຂະນະດຽວກັນ ດວງຈຳປາ ບໍ່ເຄີຍເບິ່ງຂ້າມສິ່ງເລັກໆນ້ອຍໆ ເຊັ່ນຄຸນຄ່າຄວາມງາມຂອງສິລປະ ແລະວັດທະນະທຳ ຮາກເຫງົ້າ ແຫ່ງວິຖີຊີວິດຂອງຄົນລາວເຮົາ ເຖິງວ່າຈະເປັນວິຖີຊີວິດຂອງຊາວ ບ້ານ ປະຊາຊົນຄົນທຳມະດາ ຜູ່ທຸກຍາກ ເຊັ່ນ ແມ່ທ້າວຍົດ, ເຖິງ ຂັ້ນຈະຫາເງິນມາອອກຊ່ອຍເຮັດໂລງໃຫ້ພໍ່ຕົນເອງ ດ້ານຊາວພັນ ກີບ ກໍຍັງຍາກແລ້ວ (ໂລງພໍ່ຕູ້, 1972), ແຕ່ດວງຈຳປາ ຢັ້ງຢືນວ່າ "ເງິນ" ຫຼື "ຄວາມຮັ່ງມີ" ບໍ່ແມ່ນຄຳຕອບດຽວທີ່ຖືກຕ້ອງສະເໝີໄປ, ຄວາມກະຕັນຍູ ຄວາມຮັກແພງຈິງໃຈ ແລະ ມິດຕະພາບພຸ້ນ ຕ່າງຫາກ ທີ່ສາມາດຊ່ອຍເກື້ອຍແກ້ບັນຫາໄດ້ຢ່າງແທ້ຈິງ ແລະ ຍາວນານ (...ແລະ ໂລງນັ້ນ ທຸກມື້ນີ້ ກໍຍັງຢູ່ວັດ... ມີຄົນມາບູຊາ ເຊົ່າໄປຫຼາຍເທື່ອ ໄປຕັ້ງຢູ່ໃສ ຄົນກໍລົມສູ່ກັນຟັງແຊວໆວ່າ...; ໜ: 65). ໃນກະແສສັງຄົມທີ່ພວມເທື່ອອນຊອນ ນຳການຈັດພິທີກຳ

ຕ່າງໆຢ່າງຟຸມເຟືອຍ ສິ້ນເປືອງຊັບສິນ ປານວ່າມັນແມ່ນນ້ຳ ອອກບໍ່ນັ້ນ, ເລື່ອງສັ້ນທີ່ຂຽນໄວ້ແຕ່ 40 ປີກ່ອນຂອງດວງຈຳປາ ເລື່ອງນີ້ສະທ້ອນໃຫ້ເຫັນ ເສັ້ນທາງອັນຄົດໂຄ້ງໂງ້ງໄປມາແຫ່ງວິຖີ ຊີວິດຂອງຄົນ ບໍ່ວ່າໂລກຈະໝູນຈະທັນປີ້ນປ່ຽນໄປແນວໃດ ຄຸນງາມ ຄວາມດີທີ່ເປັນຄຸນນະທັມ ເຊັ່ນ ຄວາມກະຕັນຍູຮູ້ຄຸນ ການມີນ້ຳໃຈ ເອື້ອເຟື້ອເຜື່ອແຜ່ຊ່ອຍເຫຼືອກັນ ກໍຫາກຍັງເປັນທີ່ຕ້ອງການ ແລະ ຊື່ນຊົມຂອງສັງຄົມສ່ວນໃຫຍ່. ຂະນະທີ່ ຍາແມ່ຕູ້ຍ ແລະຍາແມ່ຈ່ອຍ (ຕາກາຍ, ໜ 69) ທີ່ຈຳໃຈເຮັດແນວບໍ່ເຄີຍເຮັດ ເພື່ອຕິດຕາມ ນຳຮູ້ນຳຮອຍຂອງ "ເພິ່ນ" ຜູ້ມັກມີເຮືອນນ້ອຍ ບໍ່ອີ່ມບໍ່ພໍໃຈໃນສິ່ງ ທີ່ມີແລ້ວ ຄວາມທຸກໃຈ ຄວາມວຸ່ນວາຍກໍຍ່ອມເກີດຂຶ້ນໄດ້ກັບ ສະມາຊິກໃນຄອບຄົວຢູ່ບໍ່ແລ້ວ. ເລື່ອງທຳນອງນີ້ ເຄີຍເປັນກາບາບ ຂອງສັງຄົມຍຸກກ່ອນ ທີ່ຜູ້ຄົນຍັງເກງກົວ ແລະພະຍາຍາມປະຕິບັດ ສິນຂໍ້ກາເມສຸມິສາຈະຣາກັນຢູ່ແດ່ ແຕ່ໃນຍຸກບໍລິໂພກນິຍົມຄືແນວ ນີ້ ສິນຂໍ້ນີ້ ເບິ່ງແລ້ວຫາຄົນທີ່ຈະນຳໄປປະຕິບັດ ຄົງມີໜ້ອຍເຕັມທີ ແຕ່ໃນເວລາດຽວກັນ ຊ້ຳໃຫ້ຄວາມສຳຄັນ ສົນໃຈລົງທຶນເງິນຄຳໃສ່ ການຊື້ຢາ ເພື່ອປິ່ນປົວຮັກສາຄົນຕິດເຊື້ອ HIV ແລະຄົນ ເປັນເອດ (AIDS) ແທນ.

ອີກບັນຫານຶ່ງ ເຊິ່ງເບິ່ງຄືວ່າຈະເປັນພະຍາດຊຳເຮື້ອເຊື້ອ ແກ່ກຳຈັດຍາກ ທີ່ນັກຂຽນບໍ່ຍອມໃຫ້ຜ່ານສາຍຕາອັນແຫຼມຄົມໄປ ໃນເມື່ອມັນແຕະຕ້ອງ ສ້າງຄວາມເສຍຫາຍໃຫ້ແກ່ປະເທດຊາດ. ເອີນໍ ຄົນເຮົາ! ຂະໜາດວ່າ ປະຊາຊົນຕາດຳໆ ຜູ້ຕ້ອງສູນເສຍ ຜູ້ເປັນທີ່ຮັກຂອງເຂົາໄປ ເພື່ອສ່ວນໂຮມພໍແຮງແລ້ວນັ້ນ ຍັງຕ້ອງ

ມາເສຍໃຈຊ້ຳແລ້ວຊ້ຳອີກ ເມື່ອຄົ້ນພົບວ່າ ແທ້ໆແລ້ວ ພໍ່ຂອງຕົນທີ່ເສຍຊີວິດໃນສົງຄາມເມື່ອຫຼາຍປີກ່ອນ ແລະແມ່ກໍໄດ້ເງິນກ້ອນນຶ່ງເປັນຄ່າຫົວມາແລ້ວນັ້ນ ຍັງມີຊື່ກິນເງິນເດືອນ ສືບຕໍ່ມາຢູ່ (ພໍ່ຍັງບໍ່ຕາຍ. ໜ 83) ແຕ່ການຮູ້ຄວາມຈິງຂອງເຂົາ ມັນຊ້ຳກາຍເປັນໂຕທຳລາຍອະນາຄົດໄປຊ້ຳ ຄືກັບຄຳພັງເພີຍທີ່ວ່າ "ຄວາມຈິງເປັນສິ່ງທີ່ບໍ່ຕາຍ ແຕ່ຜູ້ເວົ້າຄວາມຈິງນັ້ນ ຕາຍໄດ້..."

ແລ້ວກໍມາຮອດເລື່ອງທຳມະດ້າ ທຳມະດາ ທີ່ເກີດຂຶ້ນແລ້ວເກີດຂຶ້ນອີກໃນສັງຄົມ ທີ່ຜູ້ຊາຍຄຶດວ່າ ໂຕເອງຕ້ອງເປັນຜູ້ເລືອກສະເໝີ. "ຊ່ຳນັ້ນແຫຼະຜູ້ຊາຍ" ! ອ່ານແຕ່ຊື່ ກໍໄດ້ຍິນສຳນຽງເສົ້າໆ ແສບໆ ແບບຊ້ຳສຸດຊ້ຳດັ່ງລອດອອກມາ ແລ້ວມັນຈັ່ງໃດລະ ບໍ່ແມ່ນວ່າ ຍາມໃດເພິ່ນກໍຈະຕ້ອງເປັນຝ່າຍເລືອກສະເໝີ ເຖິງວ່າການເລືອກນັ້ນ ຈະເພີ່ມພາລະແບກຫາບໃຫ້ແກ່ສັງຄົມຕື່ມອີກກໍຕາມ (ເດັກທີ່ພໍ່ແມ່ບໍ່ຕ້ອງການ!) ສິ່ງນີ້ ເບິ່ງຄືວ່າເປັນເລື່ອງເລັກໆ ນ້ອຍໆ ທີ່ນັກຂຽນບໍ່ອາດເມີນເສີຍໄປໄດ້ ແຕ່ທາດແທ້ເລິກລົງໄປແລ້ວ ແມ່ນມັນໝາຍເຖິງ ຄວາມບໍ່ສະເໝີພາບລະຫວ່າງຍິງຊາຍຕ່າງຫາກ ທັງໆທີ່ໃນບາງກໍລະນີ ແມ່ຍິງເອງ ຄວນຈະເປັນຜູ້ຕັດສິນ ຫຼື ເອີ້ນວ່າ ເຈົ້າການໄດ້ຫຼາຍກວ່າເກົ່າ ດັ່ງທີ່ວັນນາ ຕັດສິນເລືອກໄປແລ້ວ ແຕ່ກໍບໍ່ວາຍໄດ້ຫຼີບຫຼີກທາງສຽງສັງຄົມ ຢູ່ກັບຄວາມສະຫງົບງຽບເປັນໂສດໂດດດ່ຽວ ຫຼາຍກວ່າການຢູ່ຮ່ວມຊີວິດກັບຊາຍເຊັ່ນອຸ່ນເຮືອນ ທີ່ສວຍໂອກາດ ເອົາປຽບແມ່ຍິງບໍ່ເລືອກ...ສົມນ້ຳໜ້າບໍ່ລະ ເລີຍເປັນແບບນັ້ນສາ!

ຢ່າງໃດກໍຕາມ ບໍ່ແມ່ນວ່າ ນັກຂຽນບໍ່ໄດ້ແນມເຫັນ ຄຸນສົມບັດອັນລ້ຳເລີດປະເສີດແສນຂອງມະນຸດຮ່ວມສັງຄົມຂອງເຮົາດອກ, ດຣ. ສີສະຫວາດ (ເພື່ອຜູ້ເກີດໃໝ່, ໜ 123) ຄົງບໍ່ແມ່ນຕົວລະຄອນທີ່ມີຢູ່ແຕ່ໃນເລື່ອງສັ້ນຂອງດວງຈຳປາ ດອກ, ພວກເຮົາຜູ້ອ່ານຫຼາຍຄົນ ອາດເຄີຍພົບພານບຸກຄົນທີ່ຮັກອາຊີບຂອງຕົນເປັນຊີວິດຈິດໃຈ ຄືຢ່າງນີ້ມາແລ້ວ, ອາດຈະແມ່ນຄູສອນອາວຸໂສທີ່ຍອມຈຸ່ມຈົມດົມຂີ້ຝຸ່ນສໍຂາວ ຫຼືຄົນປັດກວາດຂີ້ເຫຍື້ອ ທີ່ຕັ້ງໃຈຢາກປັດກວາດຖະໜົນໃຫ້ສະອາດງາມຕາ ມາຕັ້ງແຕ່ໜຸ່ມຈົນເຖົ້າແຕ່ບໍ່ສຳເລັດຈັກເທື່ອ ກໍເລີຍຕ້ອງເຮັດໄປທຸກມື້ ຈົນກວ່າ...

ພວກເຮົາ ມີໜ້າທີ່ສອດສາຍຕາຊອກຮູ້ຊອກຫາຄົນແບບນີ້ ຫຼື ກໍ່ສ້າງເອົາພວກເຂົາ ໃຫ້ມີຕົວຕົນຂຶ້ນມາແທ້ໆ ບໍ່ຕ່າງຫຍັງກັບບັກສັງ (ເປັນໄປໄດ້, ໜ 107) ທີ່ໄດ້ຮັບໂອກາດເຝິກຝົນແກ້ໄຂຕົນເອງໄດ້ ສົມກັບກັບຄຳວ່າ ມະນຸດເປັນສັດທີ່ເຝິກຝົນພັດທະນາໄດ້ບໍ່ຄືກັບສັດເດຍລະສານອື່ນໆທີ່ບໍ່ມີພອນສະຫວັນອັນນີ້ ແຕ່ກວ່າຜູ້ຫຼົງຜິດ ໂດຍສະເພາະຄົນໄວໜຸ່ມໄວນ້ອຍ ຈະສຳນຶກຮູ້ໂຕໄດ້ ມັນກໍບໍ່ແມ່ນຂອງງ່າຍເລີຍ ມັນຕ້ອງແລກກັບຄວາມເຈັບປວດສູນເສຍ ແລະອັບອາຍພໍສົມຄວນ ( 116 ) ມັນຈຶ່ງຈະສຳນຶກໄດ້. ນີ້ກໍແມ່ນຄວາມຈິງອີກອັນນຶ່ງທີ່ ດວງຈຳປາ ກ້າບອກກ່າວຕໍ່ສັງຄົມ. ຍິ່ງໃນປັດຈຸບັນ ການຕິດຢາ ຕິດເຫຼົ້າ ຫຼິ້ນກິນຟູມເຟືອຍ ຕິດໝູ່ເປັນພຶງເປັນພວກ ການກໍ່ອາຊະຍາກຳ ການເປັນໂສເພນີ ດ້ວຍຄວາມພໍໃຈເພື່ອຫາລາຍຮັບເພີ່ມ... ຂອງບັນດາໄວໜຸ່ມ ບໍ່ວ່າຍິງຊາຍ ລູກຜູ້ຮັ່ງຕັ່ງມີ ຫຼືລູກຜູ້ທຸກຈົນ ພວມກາຍເປັນບັນຫາຂອງ

ສັງຄົມ ທຳລາຍເສດຖະກິດ ທຳລາຍສຸຂະພາບ ແລະ ຫຼຸດຜ່ອນ ຄວາມປອດໄພໃນຊີວິດການສຶກສາ. ການດັດສ້າງ ອົບຮົມ ທີ່ມີ ປະສິດທິຜົນນັ້ນ ມັນຕ້ອງມີເງື່ອນໄຂ ສ້າງປັດໄຈບໍລິບົດແວດລ້ອມ ອັນເອື້ອອຳນວຍໃຫ້ໄດ້ຢ່າງເໝາະສົມ ບໍ່ດັ່ງນັ້ນ ກໍຢ່າຄາດຫວັງວ່າ ມັນຈະເປັນໄປໄດ້... ຄືດັ່ງມັນເປັນໄປໃນ "ເປັນໄປໄດ້" ນັ້ນແລ...

ມາຮອດສະຕະວັດທີ 21 ຍຸກດິຊິຕອລ ຫຼືຍຸກທີ່ຂ່າວສານ ຂໍ້ມູນ ກາຍເປັນປັດໄຈແຊກຊ້ອນເຂົ້າໃນວິຖີຊີວິດຂອງຄົນນັບມື້ ນັບຫຼາຍຂຶ້ນ ແລະ ຫຼາຍຄົນກໍໃຫ້ຄວາມສຳຄັນກັບເຄື່ອງມືຂໍ້ມູນ ຂ່າວສານຈົນກາຍເປັນບັນຫາກໍມີ ດັ່ງທີ່ແມ່ຍິງຫຼາຍຄົນໃນຍຸກ ໂທລະສັບມືຖືລະບາດ ເຈັບທ້ອງເຈັບໃຈຂາຍໜ້ານຳສຽງໂທລະສັບ ຫວານໆ ທີ່ຜ່ານເຂົ້າມາໃນເຄື່ອງຮັບຂອງ "ພໍ່ເຈົ້າເຮືອນ" ດັ່ງ "ຂ້ອຍ" (ມືຖື. ໜ 145) ທີ່ຕ້ອງວາງແຜນການວຸ່ນວາຍ ເພື່ອຈັບ ຜິດຜົວ ເຊິ່ງອາດເຊື່ອງຄວາມລັບໄວ້ໃນມືຖືຂອງເພິ່ນ ແທ້ໆແລ້ວ ຄວາມລັບນັ້ນ ອາດບໍ່ມີສາລະປະໂຫຍດໃດໆ ນອກຈາກຈະຕື່ມ ຄວາມຮ້ອນໃຈໃຫ້ອີກ ແລະ ດວງຈຳປາ ກໍສາມາດຫຍິບຍົກເອົາ ບັນຫາໜັກໃຈຂອງແມ່ເຈົ້າເຮືອນຫຼາຍໆຄົນ ມາວິພາກແບບຫຼິ້ນໆ ທີ່ວໆ ໃຫ້ແງ່ຄິດອອກຈາກດ້ານລົບໄດ້.

ແນ່ນອນວ່າ ປາກົດການທັງດ້ານຫຍໍ້ທໍ້ ແລະດ້ານບວກ ຂອງຜູ້ຄົນໃນສັງຄົມ ແລະວົງການຕ່າງໆ ຍັງຈະເປັນຫົວຂໍ້ໃຫ້ນັກ ຂຽນອາວຸໂສຄົນນີ້ ບໍ່ອາດວາງປາກກາລົງໄດ້ ດ້ວຍວ່າຄວາມຮູ້ສຶກ ຮັບຜິດຊອບ, ຄວາມຫ່ວງໃຍສັງຄົມ, ສະຕິສຳນຶກໃນພາລະໜ້າທີ່ ຂອງສິນລະປິນແຫ່ງຊາດ, ຄວາມເປັນແມ່ ແມ່ຕູ້ ແມ່ເຖົ້າ ປ້າ

ອາ ເອື້ອຍ... ແລະຄວາມສຸກທີ່ໄດ້ຊຽນ ໄດ້ໃຫ້ ໄດ້ບໍລິຈາກ ສົມກັບເປັນເລືອດເນື້ອເຊື້ອໄຂ ຂອງທ່ານຜູ້ເປັນບິດາ ຄືພຸດທະບັນດິດແຫ່ງວຽງຈັນ ມື້ລາງ ທ່ານມະຫາສິລາ ວີຣະວົງສ໌, ທັງໝົດເຫຼົ່ານີ້ ຜູກພັນຝັ້ນກ້ຽວເຂົ້າກັນ ບໍ່ມີຮູ້ຮ່ອມມາຍ ນັ້ນແລ້ວ.

ສຳນັກພິມດອກເກດ ມີຄວາມພາກພູມໃຈຢ່າງຍິ່ງ ທີ່ໄດ້ນຳສະເໜີຜົນງານຊຸດນີ້ຂອງ ດວງຈຳປາ ສິບເລື່ອງ ທີ່ຊົງຄຸນຄ່າເປັນອະມະຕະ ຊ່ອຍກັນຊື້ຫາມາໄວ້ອ່ານ ເພາະທ່ານຈະບໍ່ໄດ້ແຕ່ຄວາມບັນເທີງອາລົມເທົ່ານັ້ນ ແຕ່ເລື່ອງທັງໝົດຈະຈູງທ່ານຄືນສູ່ອະດີດ ຮ່ຳຮອນຄຶດຫາລາງເຫດການລາງຕອນ ຂອງຊີວິດໃຜຜູ້ນຶ່ງ ແລະໄດ້ຊີມລົດຊາດອັນແຊບນົວຂອງພາສາລາວ ທີ່ອາດຈະເບິ່ງຄືວ່າ ດຽວນີ້ຖືກປຸງນໂອນສັນຊາດແລ້ວ! ຂໍຂອບໃຈທຸກໆທ່ານ ທີ່ມີສ່ວນອຸ້ມຊູເກື້ອກູນ ສຳນັກພິມດອກເກດ ກໍຄືວົງການວັນນະຄະດີລາວ ໃຫ້ສາມາດກ້າວເດີນໄປຖ່ວງທັນກັບການປຸ່ງນແປງອື່ນໆ.

*ດວງເດືອນ ບຸນຍາວົງ*

ສຳນັກພິມ ດອກເກດ

ບ. ໂພນທັນເໜືອ

ສິງຫາ 2012

►►► ທ່ານຜູ່ເຕັມໄປດ້ວຍປະຕິພານ !
ບັດນີ້ທ່ານກຳລັງຢູ່ທີ່ໃດ...?
ເຊີນຮັບຊາບໄວ້ແດ່ເຖີ້ນວ່າ
ເຮົາຍັງຄອງຖ້າຢູ່ດ້ວຍຄວາມຫວັງ...
ຍັງຄອງຢູ່ທີ່ຫຼັກແປດ...!



# ຍັງຄອງຢູ່ທີ່... ຫຼັກແປດ...

✍ 1958

***ວັນນັ້ນ...*** ເຮົາຍັງຈື່ໄດ້ດີ, ຈື່ໄດ້ໃນຍາມຕໍ່ໆມາ: ອາດຈະມີປະໂຫຍດໃຫ້ທ່ານລະນຶກເຖິງໄດ້ ຫາກວ່າເຮົາຈະຄົ້ນເອົາຄວາມເກົ່າມາເລົ່າໃໝ່...

ເຮົາເອງກໍບອກບໍ່ຖືກວ່າ ເປັນຫຍັງຈຶ່ງມັກຫຼີກຈາກໝູ່ແທ້ໆ ເວລາທ່ຽວຊົມໄປຕາມສະຖານທີ່ງົດງາມແຫ່ງໃດແຫ່ງໜຶ່ງ ແຕ່ເຮົາກໍເປັນດັ່ງນັ້ນຕະຫຼອດມາ ເຮົາບໍ່ມັກໂອ້ກັນໄປເອ້ກັນມາ ຈຸ້ມຫຸ້ມເບິ່ງແລ້ວອື້ໆ ນໍໆ ນຳກັນ ທັງທີ່ໃຈບໍ່ວ່ານຳປານໃດ...ເຮົາມັກເລາະ

ລຽບໄປຕາມລຳພັງ ເລາະໄປຊົມໄປ ພ້ອມກັບແຕ້ມຮູບໄປໃນໃຈ ຕື່ມເຕີມໄປໃນໃຈໄດ້ ເພາະມັນເປັນຄວາມຄຶດຂອງເຮົາເອງ ເຂົ້າໃຈກັນເລີກເຊິ່ງດີຫຼາຍ !

ວັນນັ້ນ... ຖືກລະ ວັນນັ້ນ ! ຢູ່ນ້ຳຕົກຫຼັກແປດ ເຮົາໄດ້ໄຕ່ຕາມກ້ອນຫີນທີ່ມີນ້ຳໄຫຼເຊາະຢ່າງເພີດເພີນ, ບາງບ່ອນຫີນຂຶ້ນໃຄຂຽວ ເຮົາຕ້ອງເອົາຕີນຄຳໆເບິ່ງກ່ອນ ຖ້າຢຽບຍ່ຳລົງໄປໄດ້ກໍສວ່າງໃຈໄປ, ແຕ່ຖ້າຮູ້ສຶກວ່າມື່ນຫຼາຍ ເຮົາກໍປີ້ນໄປທາງໃໝ່ ແລະ ຄຳໆຕໍ່ໄປ ຊ່າງເປັນການເລາະທີ່ອຶດອັດ ເຕັມໄປດ້ວຍຄວາມສະທົກສະທ້ານ ເວລາຢຽບຖືກກ້ອນຫີນມື່ນ...ເຮົາກໍເປີບໃຈທີ່ໄປໄດ້ໂດຍຕົນເອງ ບໍ່ຄອງຖ້າໃຜມາຈັບມືຈ່ອງ ຫຼືໃຫ້ພວກໝູ່ຮ້ອງລະວັງ ໆ ! ຈົນໜ້າຫົນຫວາຍ.

ເຮົາໄຕ່ເຫຼັ້ນໄປຈົນເຖິງແອ່ງ ທີ່ຄ້ອຍລົງສູ່ເບື້ອງລຸ່ມ ເວີກວາກດັ່ງທ້ອງເຫວ ເຫັນປາຍໄມ້ສາງຫຼາງ, ຫາກວ່ອນລົງໄປແລ້ວກໍ... ມິຫວັງ...! ເຮົາຢືນຊົມທຳມະຊາດອັນເປັນເຈີ້ຍພູຂຽວ... ເທິງພູ້ນ... ເປັນທີ່ໜ້າເສຽດາຍຫຼາຍ ຫາກໄດ້ຂຶ້ນໄປຫຼຽວລົງມາເບື້ອງລຸ່ມ ກໍຄົງຈະເຫັນຕົວເມືອງປາກເຊຢາຍດຽລະດາດຢູ່ ອ້ອມຮອບດ້ວຍສາຍນ້ຳຄົງເຊໂດນ ທີ່ຖືກກ່າຍດ້ວຍຂົວເຫຼັກຍາວຢຽດຄົງຈະຫຼຽວເຫັນລິບໆ ເຊັ່ນດຽວກັບຄວາມໂງ້ງຽວຂອງນ້ຳຂອງ.

ຫຼຽວລົງລຸ່ມກໍໜ້າວາບຫວິວໃຈ ນ້ຳທີ່ໄຫຼມາຈາກຫຼາຍແຈນັ້ນ ໄດ້ທ້ອນໂຮມກັນຢູ່ທີ່ແອ່ງໃຫຍ່ ແລ້ວກໍຖອກລົງສູ່ເບື້ອງລຸ່ມ

ດັ່ງຊ່າໆ ຢູ່ບໍ່ຂາດລະຍະ, ຫາກຈະລົມກັນກໍຄົງຈະຕ້ອງຫງ່ງງຫູຟັງ ເພາະສຽງຕົກຂອງນ້ຳນັ້ນ ... ດັງແຮງຫຼາຍ ນີ້ພວກໝູ່ຈະພາກັນເລາະມາທາງນີ້ຫຼືຍັງນໍ? ແຕ່ຕາມສັງເກດຄົງຍັງ, ເພາະບໍ່ພາກົດຮອຍ ອີກທັງເຮົາເອງກໍເປັນຄົນທຳອິດ ທີ່ລຸກຈາກພາເຂົ້າ...

ປັງ ! ສຽງປືນຜະຫຼຽງຂຶ້ນກ້ອງປ່າ, ຄວາມທີ່ກຳລັງເພີນກຳລັງຝັນ ເຮັດໃຫ້ເຮົາຕື່ນ ແລະເກີໄປບຶດໜຶ່ງ, ຂາຊ້າຍບໍ່ຮູ້ວ່າຖືກຂຶ້ນແຕ່ຍາມໃດ ແລະພ້ອມກັນນັ້ນ ກໍກ້າວຍ່າງທັນທີ ແຕ່ ... ໂອະ ຕາຍແລ້ວ !

ບໍ່ໄດ້ຢຽບຖືກຫີນກ້ອນເກົ່າທີ່ໄດ້ໄຕ່ມາ, ກັບເປັນກ້ອນແປະກັນເຊິ່ງມື່ນ ເຮົາຫຍຸມຕີນໄວ້ເພື່ອຈະຈັ້ງໃຫ້ຢູ່... ສຸດແຮງເກີດແຕ່ຕີນຊ້າຍກໍຍັງຄົງ ມື່ນລົງ ໆ ໆ.

ເຮົາພະຍາມຕ້ານນ້ຳໜັກໂຕໄວ້ ຫຼຽວຫາບ່ອນຈະຈັບຈ່ອງກໍບໍ່ມີພໍເມັດ... ບິນ ໆ ຢູ່ຢ່າງນັ້ນ ບໍ່ຮູ້ວ່າດົນປານໃດ ເຮົາລືມສຽງນ້ຳດັ່ງຊ່າໆ ລືມສຽງຝົນຮຳ-ລືມທຸກສິ່ງທຸກແນວ ໃນດວງຄວາມຄິດຄຳວ່າມື່ນ ໆ ດັ່ງກ້ອງຂຶ້ນແທນ !

ເຮົາຈັ້ງຕົວໄວ້ ຈັ້ງໄວ້, ຕີນຈຸ້ມໃສ່ກັບໃຄຫີນຈົນເຈັບ ອາ ... ສຸດສາມາດແລ້ວ ! ຂາເຮົາອ່ອນເມື່ອຍ ... ເຮົາເຄີຍໄດ້ຍິນວ່ານ້ຳໜັກຕົວເວລາຢືນຕ້ານລົມ ຫຼາຍກວ່າເວລານັ່ງ, ຄິດໄດ້ດັ່ງນັ້ນຈຶ່ງຟ້າວປະຕິບັດ ຕີນຊ້າຍໄດ້ໂອກາດຈຶ່ງພະລາດເລີຍລົງໄປສຸດກ້ອນຫີນ ເຮົາບໍ່ສົນໃຈຈະຫຼຽວຕາມ ວ່າມີຫຍັງຕໍ່ໄປ ນອກຈາກຈະ

ຄວ້າດຶງກ້ອນຫີນທີ່ໂງ່ະຂຶ້ນຢູ່ຕໍ່ໜ້າ ແລ້ວຫັນໃຈໃຫຍ່ດ້ວຍຄວາມເມື່ອຍສຸດຂີດ.

***ແຕ່... ອະນິດຈາ ! ເຮົາຕ້ອງຕົວສັ່ນຂຶ້ນມາອີກ... ເພາະບ່ອນທີ່ເຮົານັ່ງລົງນັ້ນຂຶ້ນໃຄຊຽວນື່ນ ... ໂຕຂອງເຮົາຫຍັບລົງ... ຫຍັບລົງ ໆ !***

ມືທັງສອງຈ່ອງກ້ອນຫີນໄວ້ແໜ້ນ ແຕ່ໃຜຈະຮູ້ວ່າ ຫາກໂຕລົງໄປຫ້ອຍຕ້ອນແຕ້ນຢູ່ໃນເຫວເລິກແລ້ວ ແຂນທັງສອງຈະຍັງແຂງແຮງຢູ່ທົນຕໍ່ໄປອີກບໍ່? ສຽງ **"ຕາຍແລ້ວ"** ທີ່ເຮົາກີ້ກອອກໄປນັ້ນຈະດັງຊອດເຖິງຫູພວກໝູ່ບໍ່ນໍ? ເມື່ອລອງຫັນມາເບິ່ງປາຍໄມ້ທີ່ສອນລອນຢູ່ເບື້ອງລຸ່ມ ເຮົາກໍຕ້ອງຫຼັບຕາລົງຢ່າງອ່ອນໃຈ...

***" ໂອຍ ! ນີ້ເຮົາຈະເອົາຊີວິດມາຝາກໄວ້ກັບຫຼັກແປດແທ້ລື? "***

ພວມບໍ່ກ້າພໍຈະຍົກຂາເບື້ອງໜຶ່ງຂຶ້ນປີນປ່າຍໃສ່ກ້ອນຫີນກ້ອນໃໝ່ ເພາະຖ້າຜິດທ່າອີກ ກໍຈະຕ້ອງຕົກລົງໄວກວ່າເກົ່າກໍເປັນໄດ້! ເຮົາກັ້ນໃຈຍຶດກ້ອນຫີນໄວ້ແໜ້ນ ເມັດຝົນທ່າງໆຍ້ອຍແປະປະລົງມາຈາກກົກໄມ້ໃຫຍ່ ປົນກັນກັບເຫື່ອແຫ່ງຄວາມກະວົນກະວາຍໃຈ ... ເຮົາຮ້ອງຂຶ້ນອີກ - ຮ້ອງຂໍຄວາມຊ່ວຍເຫຼືອ !

***ສຽງນ້ຳດັງຈ່ອນໆ***

ເຮົາບໍ່ກ້າຫັນໄປເບິ່ງ ເພາະຢ້ານວ່າການເຫຼືອບເບິ່ງນັ້ນຈະຊວນໃຫ້ຄວາມເຄື່ອນໄຫວກ້າວໜ້າຂຶ້ນກວ່າເກົ່າ ໂອ... ວົງທິບ... ສີສົມນຶກ... ອ້າຍແດງ ! ໄວໆແດ່ ມືນ້ອຍທັງສອງນີ້ກຳລັງຈະທົນຕໍ່ໄປບໍ່ໄດ້ແລ້ວ ແຂນກຳລັງຈະຂາດ ເຮົາກຳລັງຈະຕົກລົງເຫວ !

ເຮົາມືນຕາຂຶ້ນອີກເທື່ອໜຶ່ງ ຫຼັງຈາກໄດ້ກັ້ນໃຈເກືອບຈະຂາດໄປ...ຜູ້ມາຊ່ວຍຊີວິດໄດ້ຍື່ນມືຈັບແຂນ ແລະຈາກກຳລັງແຂນອັນແຂງແຮງນັ້ນ ເຮົາກໍບິນໂຕຂຶ້ນມາໄດ້.

**"ໂອ່ຍ ໆ ມັນແຮ່ງລົງ"** ສຽງເຮົາຍັງສັ່ນ, ນ້ຳຕາໄຫຼຊຶມອອກ - ເປັນຈັ່ງຊີ້ລະນ້ຳຕານີ້ກໍດາຍ ເວລາຢູ່ຜູ້ດຽວກໍບໍ່ເຫັນອອກມາ, ພໍມີຄົນມາຊ່ວຍ ຜັດສະແດງຄວາມອ່ອນແອໃຫ້ເຂົາເຫັນໂລດ !

**"ຢຽບລົງບ່ອນຮ່ອງມັນຕີ້"** ສຽງບອກຄ່ອຍໆ ຊ້າໆ ເຮົາປະຕິບັດຕາມຄຳບອກແລ້ວເງີຍໜ້າຂຶ້ນເບິ່ງ ອາ ! ສົມພໍ... ບໍ່ແມ່ນອ້າຍແດງ... ບໍ່ແມ່ນສີສົມນຶກ ບໍ່ແມ່ນຈັກຄົນໃນພັກພວກທີ່ມາທ່ຽວນຳກັນ !

*"ທ່ານ" ໄດ້ຈູງເຮົາອອກມາຈາກບ່ອນນີ້ນ.*

*ເຮົາຟ້າວນັ່ງລົງຢອງຢໍ້ລົງ ໃຈຍັງສັ່ນເຊັນ.*

*"ເກືອບໄປແລ້ວ ເປັນຫຍັງບໍ່ລະວັງແດ່ !"*

24 / VII ຂ່າວ ລາວ

ເຮົາອາຍຈົນຢາກມຸດດິນໜີ ທັງກໍຍັງຮູ້ສຶກຢ້ານຈົນປາກ ບໍ່ອອກ. ເຫຼືອດໄປເບິ່ງນະຮົກອັນເກືອບຈະເປັນປ່າເຮ່ວຂອງເຮົາ ຢູ່ແລ້ວນັ້ນ ຢ່າງວາບຫວິວໃຈ... ເກືອບໄປແລ້ວ... ໆ !

***"ເຊົາຕົກໃຈຫຼືຍັງ ? ໄປຫາໝູ່ຊະຕິ"***

**'ທ່ານ'** ຍັກໜ້າໄປທາງທີ່ເຮົາຍ່າງມາ, ເຮົາແນມໄປດ້ວຍ ຄວາມຮູ້ສຶກອຸ່ນໃຈ. ຄຳເວົ້າຂອງທ່ານອ່ອນໂຍນທັງຫ່ວງໃຍ ຊວນ ເອົາຄວາມຢ້ານກົວຫັບຫາຍໄປຈາກເຮົາໃນທັນທີ. ມີຫຍັງໃນໃບ ໜ້າອັນສະຫງົບຮຽວຍາວ ຄິ້ວດົກດຳ ໜ້າຜາກກ້ວາງ... ທີ່ເຮົາໄດ້ ພິນິດເບິ່ງພຽງສັ້ງວຂອງນາທີ ແລະສຽງ ສຽງທີ່ນວນຫູ ປຸ່ມດ້ວຍ ຄວາມກະລຸນາຂອງທ່ານ ທີ່ຍັງຢູ່ໃນຄວາມຊົງຈຳຂອງເຮົາຕະຫຼອດ ມາ.

***ຄຳເຕືອນສະຕິທີ່ວ່າ "ຢຽບນຳບ່ອນທີ່ນຈຸກັນຕື້ ຈັ່ງບໍ່ພະລາດ ຢຽບນຳຮ່ອງມັນນະ" ຍັງດັງກ້ອງໃນໂສຕະ ປະສາດ ເປັນສຽງທຳນອງໄທໃຕ້ທີ່ນວນຫູ ແລະປະໂລມ ໃຈໃຫ້ກ້າຫານ.***

ເຮົາບໍ່ລໍຊ້າ ຟ້າວລຸກຂຶ້ນໄຕ່ຕາມຫີນທາງກັບ ສະຫວັນ ໄດ້ໂຜດເທາະ! ໃນເວລານັ້ນເຮົາລືມໝົດທຸກສິ່ງ ແມ່ນແຕ່ຈະເອີ່ຍ ປາກຂອບບຸນຂອບຄຸນ... ຂະນະທີ່ໄຕ່ໄປ ຈິດໃຈເຮົາຕື່ນເຕັ້ນ... ບໍ່ຢ້ານພະລາດອີກແລ້ວ ແຕ່ຄ້າຍຄືວ່າ ຫູຂອງເຮົາຍັງສະດັບຟັງ

ສຽງນ້ຳທີ່ດັງຈ່ອມໆນຳຫຼັງມາ. ຈົນເຮືອບຈະສຸດໂຄ້ງທາງຂຶ້ນຝັ່ງ ເຮົາຈຶ່ງຫັນກັບມາ **'ທ່ານ'** ໄດ້ລັບຫາຍໄປສາແລ້ວ.

**ຈາກວັນນັ້ນມາ,** ຄວາມຮູ້ສຶກກໍກໍ່ຕົວຂຶ້ນໃນດວງຈິດຂອງເຮົາ... ເຮົາຄຶດ... ຄຶດເຖິງຄວາມເລີດລ້ຳແຫ່ງການປາກົດກາຍຢ່າງປະຕິຫານຂອງ **"ທ່ານ"** ຄຶດເຖິງຄວາມປະໝາດເຜີເລີຂອງເຮົາ ທີ່ບໍ່ໄດ້ຄະນຶງເຖິງແມ່ນແຕ່ຄຳວ່າ ຂອບໃຈຄຳໜຶ່ງໃນທັນທີນັ້ນ.

ຄວາມແປ້ວໃຈດັ່ງກ່າວ ກຳລັງຍິ່ງຄູນທະວີຂຶ້ນ ຈົນກາຍເປັນບາດແຜອັນຮຸ່ມຮ້ອນທົນທວາຍ ບໍ່ເລີກແລ້ວ... ອາ ! ... ທ່ານຜູ້ລຶກລັບ... ທ່ານຜູ້ເຕັມໄປດ້ວຍປະຕິຫານ... **'ທ່ານ'** ຜູ້ເປັນຍອດແຫ່ງເຈົ້າໜີ້... ເຈົ້າໜີ້ຊີວິດຂອງເຮົາເອີຍ... ເຊີນຮັບຊາບໄວ້ແດ່ເຖີ້ນວ່າ ເຮົາຍັງບໍ່ລືມ ແລະ ພ້ອມຈະຮັບໃຊ້ໜີ້ບຸນຄຸນນີ້ ທຸກໆວັນທີ 3 ກໍລະກະດາ... ທີ່ຫຼັກແປດ... ປາກເຊ...!

***ເຮົາຈະຍັງຄອງຖ້າຢູ່ທີ່ຫຼັກແປດ.***

❁ ❁ ❁

♥♥♥ ໃນເມື່ອຜູ່ຊາຍເຮົາມີໂອກາດເລືອກ ເຮົາກໍເລືອກ ຄືບຸບສະໜອງເລືອກນັ້ນລະ ບົວແກ້ວຫຼືໂສພາ? ແລະໃນເມື່ອມີໂອກາດ ແມ່ຍິງເຂົາກໍສວຍໂອກາດເປັນຄືກັນ ຈຶ່ງເປັນທີ່ມາຂອງເລື່ອງນີ້.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ